ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ກອງປະຊຸມ
# ສະຫຼຸບການເຄື່ອນໄຫວວຽກງານ ປະຈໍາ 5 ເດືອນ 2021, ພິທີມອບຮັບໃບຍັ້ງຢືນ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ການປະກາດການຈັດຕັ້ງຂັ້ນພະແນກ ທຫລ.ຊຂ




ໃນວັນທີ 24 ພຶດສະພາ 2021 ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ປະຈໍາ 5 ເດືອນ 2021, ພິທີມອບຮັບໃບຍັ້ງຢືນ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ການປະກາດການຈັດຕັ້ງຂັ້ນພະແນກ ທຫລ.ຊຂ ຂຶ້ນທີ່ຫ້ອງປະຊຸມ ທຫລ.ຊຂ, ພາຍໃຕ້ການເປັນປະທານໂດຍ ທ່ານ ວິສອນ ໄຊສິງຄາມ ເລຂາຄະນະພັກຮາກຖານ, ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ, ມີຮອງຫົວໜ້າສາຂາ, ຄະນະພະແນກ ແລະ ພະນັກງານ ທຫລ.ຊຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້ ທ່ານ ນາງ ໜອມ ຫຼວງວິໄລ ຮອງເລຂາໜ່ວຍພັກ, ຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ໄດ້ຂຶ້ນຜ່ານບົດສະຫຼຸບການເຄື່ອນໄຫວວຽກງານທີ່ຜ່ານມາ: ທຫລ.ຊຂ ໄດ້ຖືເອົາການສຶກສາອົບຮົມການເມືອງແນວຄິດໃຫ້ແກ່ຖັນແຖວພະນັກງານ-ລັດຖະກອນ ເປັນບັນຫາຕົ້ນຕໍໂດຍຜ່ານຂະບວນການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ, ໜ່ວຍພັກ, ການຈັດຕັ້ງລັດ ແລະ ໄດ້ຮ່ວມຊີວິດການເມືອງເປັນປົກກະຕິ ເພື່ອເຮັດໃຫ້ພະນັກງານ-ລັດຖະກອນ ມີແນວຄິດອຸ່ນອຽນ, ທຸ່ນທ່ຽງ,

ເຊື່ອມຊຶມ ແລະ ເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ-ລັດ, ປະຕິບັດຕາມແບບແຜນວິທີເຮັດວຽກແບບລວມສູນປະຊາທິປະໄຕ, ຫ້າວຫັນຕໍ່ໜ້າທີ່ວຽກງານຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຕາມການມອບໝາຍຢ່າງຕັ້ງໜ້າ.

ພ້ອມດຽວກັນນີ້, ກໍ່ໄດ້ຜ່ານມະຕິຕົກລົງວ່າດ້ວຍການຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ສະບັບເລກທີ 75/ຄປພຂ.ຊຂ, ລົງວັນທີ 30 ເມສາ 2021, ໃຫ້ກຽດຂຶ້ນມອບໃບຢັ້ງຢືນໂດຍທ່ານ ວິສອນ ໄຊສົງຄາມ ເລຂາຄະນະພັກຮາກຖານ, ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ແລະ ຮັບເອົາແມ່ນ ທ່ານ ນາງ ໝອມ ຫຼວງວິໄລ ຮອງເລຂາໜ່ວຍພັກ, ຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ.





ຫຼັງຈາກນັ້ນ, ທ່ານ ເພັດສະລາດ ວົງພະຈັນ ຄະນະໜ່ວຍພັກ, ຮອງຫົວໜ້າສາຂາ ທຫລ.ຊຂ ໄດ້ຂຶ້ນຜ່ານຂໍ້ຕົກລົງວ່າດ້ວຍການຍົກຍ້າຍ ແລະ ແຕ່ງຕັ້ງຂັ້ນຄະນະພະແນກ, ສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ເລກທີ 245-255/ທຫລ, ລົງວັນທີ 13 ພຶດສະພາ 2021.

ໃນຕອນທ້າຍພິທີ ທ່ານ ວິສອນ ໄຊສົງຄາມ ເລຂາຄະນະພັກຮາກຖານ, ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ໄດ້ຍ້ອງຍໍຊົມເຊີຍຕໍ່ກັບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ພ້ອມທັງໂອ້ລົມຕໍ່ບັນດາພະນັກງານ ໃຫ້ເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດຕໍ່ແບບແຜນວິທີເຮັດວຽກ ກໍ່ຄືຫຼັກການນຳພາຂອງພັກ ເຊິ່ງເປັນພື້ນຖານທີ່ສຳຄັນຂອງການນຳພາ, ຕ້ອງໄດ້ຄົ້ນຄວ້າແບ່ງງານ-ແບ່ງຄວາມຮັບຜິດຊອບໃຫ້ຈະແຈ້ງເໝາະສົມ, ກຳນົດກົນໄກການເຮັດວຽກໃຫ້ຄ່ອງຕົວ, ສ້າງສາຍພົວພັນອັນດີກັບບັນດາພະແນກ ການກໍ່ຄືອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ. ພ້ອມກັນນີ້, ປະຕິບັດລະບອບເຮັດວຽກການລາຍງານຕາມຂັ້ນຕາມສາຍງານ, ບຸກຄົນຂຶ້ນກັບການຈັດຕັ້ງ, ຕັ້ງໜ້າປະຕິບັດລະບຽບລັດຖະກອນຍັງບໍ່ທັນເຂັ້ມງວດ.

ຂ່າວ: ສຸກສະຫວັນ ພົມມະວົງ